ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ຄະນະປະຈຳ

ເລກທີ 133 /ຄປຈ.ຕສ

ນະຄອນຫຼວງວຽງຈັນ, ວັນທີ 17 / 05 / 21

# ມະຕິ
## ຂອງຄະນະປະຈຳສະພາແຫ່ງຊາດ
## ວ່າດ້ວຍການແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາ ແຫ່ງ ລາຊະອານາຈັກໄທ

- ອີງຕາມການເຫັນດີຂອງກອງປະຊຸມຄັ້ງປະຖົມມະລຶກ ຂອງຄະນະປະຈຳສະພາແຫ່ງຊາດ ຊຸດທີ IX, ຄັ້ງວັນທີ 21-23 ເມສາ 2021.
- ອີງຕາມໜັງສືສະເໜີຂອງກຳມາທິການການຕ່າງປະເທດ ສະບັບເລກທີ 79/ກຕທ, ລົງວັນທີ 4/5/2021.

ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມຖານບ້ານໃກ້ເຮືອນຄຽງທີ່ດີ ລະຫວ່າງ ສະພາແຫ່ງຊາດລາວ ແລະ ລັດຖະສະພາ ແຫ່ງ ລາຊະອານາຈັກໄທ.

**ຄະນະປະຈຳສະພາແຫ່ງຊາດ ຕົກລົງ:**

**ມາດຕາ 1** ເຫັນດີແຕ່ງຕັ້ງສະມາຊິກສະພາແຫ່ງຊາດ ເຄື່ອນໄຫວໃນຄະນະມິດຕະພາບລັດຖະສະພາ ລະຫວ່າງສະພາແຫ່ງຊາດລາວ ແລະ ລັດຖະສະພາ ແຫ່ງ ລາຊະອານາຈັກໄທ, ຊຶ່ງປະກອບດ້ວຍບັນດາທ່ານ ດັ່ງນີ້:

1. ທ່ານ ສຸບັນ ສະອະບຸດ, ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ສສຊ ເຂດ 14 ແຂວງສາລະວັນ, ເປັນປະທານ;
2. ທ່ານ ນາງ ສົມພຽນ ວົງໄຊ, ສສຊ ເຂດ 1 ນະຄອນຫຼວງວຽງຈັນ, ເປັນຮອງປະທານ;
3. ທ່ານ ບຸນສອນ ເພັດລາວັນ, ສສຊ ເຂດ 10 ແຂວງວຽງຈັນ, ເປັນຄະນະ;
4. ທ່ານ ສຸວັນນີ ໄຊຊະນະ, ສສຊ ເຂດ 11 ແຂວງບໍລິຄຳໄຊ, ເປັນຄະນະ;
5. ທ່ານ ນາງ ບົວຄົມ ຂານສຸວົງ, ສສຊ ເຂດ 5 ແຂວງບໍ່ແກ້ວ, ເປັນຄະນະ;
6. ທ່ານ ກົລະກັນ ພົມມະວົງ, ສສຊ ເຂດ 6 ແຂວງຫຼວງພະບາງ, ເປັນຄະນະ;
7. ທ່ານ ນາງ ວັນນາ ພົມວິສອນ, ສສຊ ເຂດ 7 ແຂວງໄຊຍະບູລີ, ເປັນຄະນະ;
8. ທ່ານ ນາງ ອາລີ ບົວຈຸມ, ສສຊ ເຂດ 12 ແຂວງຄຳມ່ວນ, ເປັນຄະນະ;

| | | |
|---|---|---|
| 9. ທ່ານ ພົທ. ຄູນສະໄໝ ລິນສັນຍາ, | ສສຊ ເຂດ 13 ແຂວງສະຫວັນນະເຂດ, | ເປັນຄະນະ; |
| 10. ທ່ານ ສຸກສະຫວັນ ຈັນທິສຸກ, | ສສຊ ເຂດ 14 ແຂວງສາລະວັນ, | ເປັນຄະນະ; |
| 11. ທ່ານ ຄຳໄຕ ແກ້ວດວງດີ, | ສສຊ ເຂດ 15 ແຂວງຈຳປາສັກ, | ເປັນຄະນະ. |

**ມາດຕາ 2** ບັນດາສະມາຊິກສະພາແຫ່ງຊາດ, ບັນດາກຳມາທິການ, ຄະນະເລຂາທິການ ແລະ ພາກສ່ວນທີ່ກ່ຽວຂ້ອງ ຂອງສະພາແຫ່ງຊາດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດມະຕິຕົກລົງສະບັບນີ້ ເປັນຢ່າງດີ.

**ມາດຕາ 3** ມະຕິຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຄະນະປະຈຳສະພາແຫ່ງຊາດ**

**ປະທານ**

**ປອ ໄຊສົມພອນ ພົມວິຫານ**